ເວລາຮູບເງົາ 44 ນາທີ

EP 1 : ຄວາມຫຼາກຫຼາຍທາງເພດ SGD (Sexual Gender Diversity)

ຊຸດຄຳຖາມສົນທະນາ:
1. ທ່ານເຫັນຫຍັງແດ່ຈາກຊີຣີ້ເລື່ອງນີ້?
2. ໃນຄອບຄົວ, ໝູ່ເພື່ອນ ຫຼື ສະຖານທີ່ເຮັດວຽກຂອງທ່ານ ມີຄົນເປັນເພດທີ່ສາມບໍ່ ແລະ ຖ້າມີ ທ່ານຄິດແນວໃດກັບພວກເຂົາເຫຼົ່ານັ້ນ?
3. ທ່ານຄິດວ່າການຍອມຮັບເພດທີສາມໃນສັງຄົມລາວມີຫຼາຍໜ້ອຍປານໃດ?
4. ມີປະເດັນ ຫຼື ເຫດການໃດແດ່ທີ່ກ່ຽວຂ້ອງກັບຊີວິດຈິງ ຫຼື ເຫດການຕ່າງໆໃນສັງຄົມປະຈຸບັນ?
5. ຖ້າທ່ານພົບກັບເຫດການໃດໜຶ່ງໃນນັ້ນ, ທ່ານຈະມີວິທີແກ້ໄຂແນວໃດ?(ເລືອກເຫດການໃດໜຶ່ງ)

ເນື້ອໃນຂອງ EP1 ເວົ້າເຖິງ:
(SGD / LGBTIQ+) ແມ່ນ ບຸກຄົນທີ່ມີລັກສະນະທາງເພດ, ລົດຊະນິຍົມທາງເພດ, ການສະແດງອອກທາງເພດ, ບົດບາດທາງເພດ ແລະ ເພດໂດຍກຳເນີດທີ່ມີຄວາມແຕກຕ່າງກັນໄປແຕ່ລະບຸກຄົນ.
(ຂໍ້ມູນຈາກ Proud to Be Us Laos - ພູມໃຈທີ່ເປັນເຮົາ)

ເວລາຮູບເງົາ 41ນາທີ

EP 2 : ການນຳໃຊ້ຖົງຢາງອະນາໄມ

ຊຸດຄຳຖາມສົນທະນາ:
1. ມີປະເດັນ ຫຼື ເຫດການໃດແດ່ທີ່ກ່ຽວຂ້ອງກັບຊີວິດຈິງ ຫຼື ເຫດການຕ່າງໆໃນສັງຄົມປະຈຸບັນ?
2. ຖົງຢາງອະນາໄມມີຈັກແບບ?
3. ການໃສ່ຖົງຢາງອະນາໄມເວລາມີເພດສຳພັນຊ່ວຍຫຍັງເຮົາແດ່?
4. ຖ້າບໍ່ໃສ່ຖົງຢາງອະນາໄມເວລາມີເພດສຳພັນຈະກໍ່ໃຫ້ເກີດຫຍັງຂຶ້ນ ?

ເນື້ອໃນຂອງ EP2 ເວົ້າເຖິງ:
ຄຸນປະ�โຫຍດ ແລະ ການນຳໃຊ້ຖົງຢາງອະນາໄມທີ່ຖືກຕ້ອງ ແມ່ນເຮັດໃຫ້ການຮ່ວມເພດນັ້ນປອດໄພຄື ບໍ່ໃຫ້ຕິດເຊື້ອພະຍາດຕ່າງໆທາງເພດສຳພັນ ໂດຍສະເພາະແມ່ນໂລກເອດສ ຊຶ່ງກຳລັງແຜ່ລະບາດຢູ່ໃນປະຈຸບັນ, ຖົງຢາງອະນາໄມຍັງຊ່ວຍປ້ອງກັນການຖືພາໄດ້ເຖິງ 82% ແລະ ໃຊ້ໃນການມີລູກຫ່າງອີກດ້ວຍ ເຊິ່ງຖົງຢາງອະນາໄມ 01ຖົງໃຊ້ໄດ້ພຽງຄັ້ງດຽວເທົ່ານັ້ນ.
ຂໍ້ດີ ຂອງຖົງຢາງອະນາໄມ: ປອດໄພ, ບໍ່ຈຳເປັນຕ້ອງມີໃບສັ່ງຢາຈາກທ່ານໝໍ ຫຼື ການກວດກາທາງການແພດ, ໃຊ້ງ່າຍ ແລະ ສາມາດປ້ອງກັນຈາກ ພຕພ, HIV/AIDS.
ຂໍ້ເສຍ ຂອງຖົງຢາງອະນາໄມ: ອາດຈະລົບກວນການມີເພດສຳພັນ, ອາດຫຼຸດຄວາມຮູ້ສຶກສຳລັບແມ່ຍິງ ຫຼື ຜູ້ຊາຍ, ຕ້ອງມີການສື່ສານ ແລະ ຍິນຍອມ ຈາກທັງສອງຝ່າຍ.
ການນຳໃຊ້: ຖົງຢາງອະນາໄມ ຕ້ອງໃໝ່, ສາມາດໃຊ້ໄດ້ພຽງແຕ່ຄັ້ງດຽວ ແລະ ຕ້ອງໃຊ້ຖົງຢາງອະນາໄມທຸກໆຄັ້ງກ່ອນມີເພດສຳພັນ.
(ຂໍ້ມູນຈາກ ສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມ ນະຄອນຫຼວງວຽງຈັນ)

ເວລາຮູບເງົາ 36 ນາທີ

EP 3 : ພະຍາດຕິດຕໍ່ທາງເພດສຳພັນ (ພຕພ)

ຊຸດຄຳຖາມສົນທະນາ:
1. ພະຍາດຕິດຕໍ່ທາງເພດສຳພັນ (ພຕພ) ແມ່ນຫຍັງ?
2. ເຮົາສາມາດປ້ອງກັນຕົນເອງຈາກພະຍາດ ພຕພ ໄດ້ແນວໃດ?
3. ເມື່ອເປັນແລ້ວເຮົາຄວນມີວິທີຮັກສາແນວໃດ?

ເນື້ອໃນຂອງ EP3 ເວົ້າເຖິງ:
- ພະຍາດຕິດຕໍ່ທາງເພດສຳພັນ (STIs ຫຼື ພຕພ) ແມ່ນການຕິດເຊື້ອທີ່ເກີດຈາກການຮ່ວມເພດລະຫວ່າງ ຍິງ-ຊາຍ ແລະ ເພດດຽວກັນໂດຍທີ່ບໍ່ໄດ້ປ້ອງກັນເຊັ່ນ: ທາງຊ່ອງຄອດ, ຮູທະວານ ແລະ ປາກ.
- ອາການພະຍາດ ພຕພ ທີ່ສາມາດສົ່ງເກດໄດ້ຫຼັງຈາກມີເພດສຳພັນເຊັ່ນ: ມີໜອງຍ້ອຍ ຫຼື ລົງຂາວຜິດປົກກະຕິ, ເຈັບ ແລະ ແສບເວລາປັດສະວະ, ມີອາການຄັນຕາມອະໄວຍະວະເພດ, ມີຕຸ່ມຂຶ້ນຕາມອະໄວຍະວະເພດ,ປາກ ແລະ ຮູທະວານ (ກໍລະນີມີການຮ່ວມເພດຫຼາຍທາງ), ມີບາດແຜຕາມອະໄວຍະວະເພດ.
(ຂໍ້ມູນຈາກ ສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມ ນະຄອນຫຼວງວຽງຈັນ)

ເວລາຮູບເງົາ 30 ນາທີ

EP 4: ສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມ ນະຄອບຫຼວງ (ຄຣິນິກໄວໜຸ່ມ)

ຊຸດຄຳຖາມສົນທະນາ:
1. ທ່ານເຫັນຫຍັງແດ່ໃນຮູບເງົາຕອນນີ້ ?
2. ທ່ານເຄີຍໄດ້ຍິນສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມ ຫຼື ຄຣິນິກໄວໜຸ່ມບໍ?
3. ຮູ້ບໍ່ວ່າຄຣິນິກໄວໜຸ່ມແມ່ນຄຣິນິກແນວໃດ, ສາມາດໄປໃຊ້ບໍລິການຫຍັງໄດ້ແດ່ ?

ເນື້ອໃນຂອງ EP4 ເວົ້າເຖິງ:
ສູນໄວໜຸ່ມ ແມ່ນໃຫ້ຄຳປຶກສາກ່ຽວກັບສຸຂະພາບຈະເລີນພັນ, ມີຫ້ອງກວດສຸຂະພາບໄວໜຸ່ມທີ່ເປັນມິດປິດລັບ, ຄຣິນິກໄວໜຸ່ມສາມາດໃຫ້ການບໍລິການ: ວາງແຜນຄຸມກຳເນີດ (ຖົງຢາງອະນາໄມ, ຢາຄຸມກຳເນີດສຸກເສີນ, ຢາກິນຄຸມກຳເນີດ, ຝັງຮໍໂມນຄຸມກຳເນີດ, ໃສ່ຮ່ວງ) ການກວດວິເຄາະ ລົງຂາວ, ຫນອງໃນ, ກວດເລືອດທົ່ວໄປ, ກວດຫາທາດໄຂມັນ, ນ້ຳຕານ ແລະ ອື່ນໆ.
ນອກຈາກນັ້ນ, ຍັງມີກິດຈະກຳໃຫ້ຄຳປຶກສາທາງໂທລະສັບ 1361 ແມ່ນເຜດຍິງຮັບສາຍ ແລະ 137 ເຜດຊາຍເປັນຜູ້ຮັບສາຍ.
(ຂໍ້ມູນຈາກ ສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມ ນະຄອນຫຼວງວຽງຈັນ)

ເວລາຮູບເງົາ 32 ນາທີ

EP 5 : ຄວາມຫຼາກຫຼາຍທາງເພດ (ຍິງຮັກຍິງ)

ຊຸດຄຳຖາມສົນທະນາ:
1. ມີປະເດັນ ຫຼື ເຫດການໃດແດ່ທີ່ກ່ຽວຂ້ອງກັບຊີວິດຈິງ ຫຼື ເຫດການຕ່າງໆໃນສັງຄົມປະຈຸບັນ?
2. ໃນຄອບຄົວ, ໝູ່ເພື່ອນ ຫຼື ສະຖານທີ່ເຮັດວຽກຂອງທ່ານ ມີຄົນເປັນເພດທີສາມ (ຍິງຮັກຍິງ) ບໍ່? ແລະ ຖ້າມີທ່ານຄິດແນວໃດກັບພວກເຂົາເຫຼົ່ານັ້ນ?
3. ທ່ານຄິດວ່າການຍອມຮັບເພດທີສາມ (ຍິງຮັກຍິງ)ໃນສັງຄົມລາວມີຫຼາຍໜ້ອຍປານໃດ?
4. ທ່ານຮູ້ສຶກແນວໃດກັບບຸກຄົນທີ່ເປັນເພດທີ່ສາມ (ຍິງຮັກຍິງ) ?

ເນື້ອໃນຂອງ EP5 ເວົ້າເຖິງ:
L = Lesbian: ຜູ້ຍິງທີ່ມີລົດຊະນິຍົມມັກຮັກເພດດຽວກັນ ສະແດງຢູ່ການແຕ່ງໂຕເປັນຜູ້ຍິງ,ກິລິຍາມາລະຍາດ, ຄຳເວົ້າແບບຜູ້ຍິງ ຕ່າງແຕ່ມີໃຈມັກຮັກໃນເພດດຽວກັນ ນັ້ນເອີ້ນວ່າ ເລສບັຽນ (ຍິງຮັກຍິງ).
(ຂໍ້ມູນຈາກ Proud to Be Us Laos - ພູມໃຈທີ່ເປັນເຮົາ)

ເວລາຮູບເງົາ 41ນາທີ

EP6 : ການຖືພາແບບບໍ່ໄດ້ວາງແຜນ



ຊຸດຄຳຖາມສົນທະນາ:
1. ມີປະເດັນ ຫຼື ເຫດການໃດແດ່ທີ່ກ່ຽວຂ້ອງກັບຊີວິດຈິງ ຫຼື ເຫດການຕ່າງໆໃນສັງຄົມປະຈຸບັນ?
2. ເຮົາຄວນມີວິທີປ້ອງກັນແນວໃດ ເພື່ອຫຼີກລ້ຽງການຖືພາແບບບໍ່ໄດ້ວາງແຜນ ແລະ ເປັນພະຍາດຕິດຕໍ່ທາງເພດສຳພັນ?
3. ທ່ານຄິດວ່າຖ້າມີເພດສຳພັນເວລາທີ່ຍັງບໍ່ພ້ອມ ຈະມີວິທີປະຕິເສດ ຫຼື ຕໍ່ລອງແນວໃດ ?
4. ທ່ານຄິດວ່າແມ່ນຫຍັງເປັນຄວາມສ່ຽງ ທີ່ເຮັດໃຫ້ເກີດການມີເພດສຳພັນແບບບໍ່ປອດໄພ ?
5. ຈະມີວິທີປ້ອງກັນແນວໃດ ເພື່ອບໍ່ໃຫ້ເກີດຄວາມສ່ຽງທີ່ວ່າມານັ້ນ ?

ເນື້ອໃນຂອງ EP6 ເວົ້າເຖິງ:
ການຮັບມືກັບການຖືພາແບບບໍ່ໄດ້ວາງແຜນ ກ່ອນຈະມີເພດສຳພັນກັບຄູນອນແຕ່ລະຄັ້ງ ຄວນຄຳນຶງເຖິງ ຜົນທີ່ຈະຕາມມາ ຫຼັງຈາກການມີເພດສຳພັນທີ່ບໍ່ປອດໄພ (ມີເພດສຳພັນແບບບໍ່ໄດ້ປ້ອງກັນ) ເຊັ່ນ: ການຖືພາແບບບໍ່ໄດ້ວາງແຜນ ນອກນັ້ນກໍອາດຈະເຮັດໃຫ້ຕິດພະຍາດຕິດຕໍ່ທາງເພດສຳພັນ (ພຕພ), ຕິດເຊື້ອ HIV/AIDS ແລະ ອື່ນໆ. ເພື່ອບໍ່ໃຫ້ບັນຫາຕ່າງໆທີ່ວ່າມານັ້ນເກີດຂຶ້ນ ກ່ອນການມີເພດສຳພັນທຸກໆຄັ້ງ ຄວນມີການປ້ອງກັນ ຄື ໃສ່ຖົງຢາງອະນາໄມ, ມີຄູ່ນອນພຽງແຕ່ຄົນດຽວ ແລະ ທີ່ສຳຄັນທີ່ສຸດ ບໍ່ຄວນມີເພດສຳພັນເມື່ອຍັງບໍ່ພ້ອມ.
(ຂໍ້ມູນຈາກ ສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມ ນະຄອນຫຼວງວຽງຈັນ)

ເວລາຮູບເງົາ 40 ນາທີ

EP7 : ຄວາມສະເໝີພາບທາງເພດ

ຊຸດຄຳຖາມສົນທະນາ:
1. ທ່ານເຫັນຫຍັງແດ່ຈາກຊີຣີ້ເລື່ອງນີ້ ?
2. ມີປະເດັນ ຫຼື ເຫດການໃດແດ່ທີ່ກ່ຽວຂ້ອງກັບຊີວິດຈິງ ຫຼື ເຫດການຕ່າງໆທີ່ເກີດຂຶ້ນໃນສັງຄົມປະຈຸບັນ?
3. ທ່ານ, ໝູ່ເພື່ອນ, ຫຼື ຄົນຮູ້ຈັກ ເຄີຍພົບກັບເຫດການໃນເລື່ອງນີ້ບໍ? ຖ້າເຄີຍ,ແມ່ນເຫດການໃດ?
4. ທ່ານຄິດວ່າຄວນຈັດການ ຫຼື ແກ້ໄຂແນວໃດເພື່ອບໍ່ໃຫ້ບັນຫາການແບ່ງແຍກເຫຼົ່ານັ້ນເກີດຂຶ້ນອີກ ?

ເນື້ອໃນຂອງ EP7 ເວົ້າເຖິງ:
ການແບ່ງແຍກ, ການບໍ່ເທົ່າທຽມກັນໃນຄອບຄົວ, ເຜດຍິງບໍ່ໄດ້ຮັບການສະໜັບສະໜຸນດ້ານການສຶກສາ ເທົ່າທຽມກັບເຜດຊາຍ ແລະ ທັດສະນະຄະຕິຂອງ ພໍ່ ຕໍ່ກັບ ລູກສາວ (ເຜດຍິງ).
ເຊິ່ງໃນລັດຖະທຳມະນູນແຫ່ງ ສປປ ລາວ ມາດຕາ 22 ໄດ້ລະບຸວ່າ "ພົນລະເມືອງລາວ ໂດຍ ບໍ່ ຈຳແນກ ຍິງ-ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ສະເໝີພາບຕໍ່ໜ້າກົດໝາຍ". ມາດຕາ 24 ໄດ້ລະບຸວ່າ "ພົນລະເມືອງລາວ ຍິງ-ຊາຍ ມີສິດເທົ່າທຽມກັນໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ" ແລະ ມາດຕາ 25 ລະບຸວ່າ "ພົນລະເມືອງລາວ ມີສິດໃນການສຶກສາຮ່ຳຮຽນ"

ເວລາຮູບເງົາ 44 ນາທີ

EP8 : ຄວາມເທົ່າທຽມທາງເພດໃນສັງຄົມ

ຊຸດຄຳຖາມສົນທະນາ:
1. ມີປະເດັນ ຫຼື ເຫດການໃດແດ່ທີ່ກ່ຽວຂ້ອງກັບຊີວິດຈິງ ຫຼື ເຫດການຕ່າງໆໃນສັງຄົມປະຈຸບັນ?
2. ຖ້າສະຖານະການໃນເລື່ອງ (ເລືອກເອົາເຫດການໃດໜຶ່ງ) ເກີດຂຶ້ນກັບທ່ານ ທ່ານຈະແຮັດແນວໃດ?
3. ທ່ານຄິດວ່າສັງຄົມລາວປະຈຸບັນເປີດໂອກາດໃຫ້ເພດທີສາມ ໃນການໃຊ້ຊີວິດ (ມີສິດອອກຄຳຄິດເຫັນ, ໄດ້ຮັບການຈ້າງງານ ....) ຫຼາຍໜ້ອຍສໍ່າໃດ ?
4. ທ່ານມີຄຳເຫັນ ຫຼື ຂໍ້ສະເໜີແນວໃດ ເພື່ອໃຫ້ເກີດຄວາມເທົ່າທຽມກັນທາງເພດໃນສັງຄົມລາວ?

ເນື້ອໃນຂອງ EP8 ເວົ້າເຖິງ:
ຄວາມສະເໝີພາບທາງເພດ (Gender Equality) ໃນໄລຍະຫຼັງຄົນເຮົາອາດຈະໄດ້ຍິນແນວຄິດນີ້ຜ່ານສື່ຕ່າງໆຫຼາຍ ເຊິ່ງມັນເປັນເລື່ອງຂອງມະນຸດທຸກເພດ ທຸກໄວ ທຸກສະຖານະ ທີ່ມີສິດໃນຄວາມເປັນມະນຸດຢ່າງເທົ່າທຽມກັນ. ມະນຸດທີ່ເກີດມາເທິງໂລກນີ້ບໍ່ວ່າຈະເປັນເພດໃດ ກໍມີສິດເທົ່າທຽມກັນເຊັ່ນ: ສິດໃນການຢູ່ລອດ, ສິດໃນການພັດທະນາ, ສິດໃນການປົກປ້ອງ, ສິດໃນການມີສ່ວນຮ່ວມ.
ຂໍ້ມູນຈາກ Gender Development Association (GDA)

ວິທີການນຳໃຊ້

ສາຍຮູບເງົາໃນ EP ທີ່ຕ້ອງການນຳສະເໜີ, ພາຍຫລັງສາຍຮູບເງົາແລ້ວ ກ່ອນອື່ນຄວນຖາມຄວາມຮູ້ສຶກຂອງຜູ້ເບິ່ງວ່າ ມີຄວາມຮູ້ສຶກແນວໃດຕໍ່ກັບ EP ດັ່ງກ່າວ. ຕໍ່ຈາກນັ້ນຈຶ່ງກ້າວເຂົ້າສູ່ຄຳຖາມວິຊາການທີ່ແທດເໝາະກັບເນື້ອໃນຂອງຊີຣີ້. ເຊິ່ງພວກເຮົາໄດ້ມີຊຸດຄຳຖາມຈຳນວນໜຶ່ງໄວ້ໃຫ້ ຜູ້ນຳໃຊ້ສາມາດປັບປຽນຄຳຖາມໄດ້ຕາມຄວາມເໝາະສົມອີງຕາມຈຸດປະສົງທີ່ຈະນຳໃຊ້ ແລະ ສຸດທ້າຍແມ່ນແນະນຳໃຫ້ຜູ້ເຂົ້າຮ່ວມເບິ່ງຊີຣີ້ໃຫ້ຄົບທຸກຕອນ ພ້ອມທັງສະເໜີຄວາມເປັນມາຂອງຊີຣີ້ ຕາມຂໍ້ມູນລຸ່ມນີ້:

ຊີຣີ້ເລື່ອງນີ້ແມ່ນຂຽນໂດຍນັກຂຽນຮູ້ໂຄງການ InYouth ທັງ18ນ້ອງ ທີ່ຖືກຄັດເລືອກມາຈາກທົ່ວປະເທດ ເພື່ອເຂົ້າຮ່ວມຝຶກອົບຮົມທັກສະການຜະລິດຮູບເງົາສັ້ນ ນຳ ສູນພັດທະນາຊົນນະບົດ ແລະ ບໍລິສັດມາຍມີເດຍ ຈຳກັດ ເປັນໄລຍະເວລາ 1ປີ ໂດຍໄດ້ຮັບທຶນຈາກໂຄງການ voice.
ຊີຣີ້ເລື່ອງນີ້ມີທັງໝົດ 8 ຕອນດ້ວຍກັນ ເຊິ່ງເນື້ອໃນບົດລະຄອນແຕ່ລະຕອນແມ່ນມີເຄົ້າໂຄງມາຈາກເລື່ອງຈິງຂອງໄວໜຸ່ມໃນ ສປປ ລາວ ຜ່ານການເປີດກອງປະຊຸມປຶກສາຫາລື ກັບໄວໜຸ່ມຢູ່ໃນນະຄອນຫຼວງວຽງຈັນ ແລະ ໄວໜຸ່ມຢູ່ແຂວງຜົ້ງສາລີ ໂດຍຮ່ວມກັບ ອົງການແຄຣປະຈຳລາວ, ສູນພັດທະນາແມ່ຍິງ ແລະ ໄວໜຸ່ມນະຄອນຫຼວງ ແລະ ກຸ່ມພູມໃຈທີ່ເປັນເຮົາ.
ຈຸດປະສົງ ທີ່ຜະລິດຊີຣີ້ເລື່ອງນີ້ ແມ່ນເພື່ອຢາກສົ່ງເສີມໃຫ້ໄວໜຸ່ມ ແລະ ຜູ້ປົກຄອງຮັບຮູ້ ແລະ ເຂົ້າໃຈເຖິງບັນຫາທີ່ເກີດຂຶ້ນດ້ານສຸຂະພາບທາງເພດ ແລະ ຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ພ້ອມກັນນັ້ນຍັງໃຫ້ພວກເຂົາໄດ້ຮູ້ເຖິງຊ່ອງທາງການໃຫ້ຄຳປຶກສາ ແລະ ວິທີການແກ້ໄຂ ເພື່ອຫຼຸດຜ່ອນບັນຫາດັ່ງກ່າວທີ່ອາດຈະເກີດຂຶ້ນກັບໄວໜຸ່ມເອງໃນອະນາຄົດ.

ໝາຍເຫດ : ຊີຣີ້ເລື່ອງນີ້ບໍ່ມີຈຸດປະສົງໃນການຫາລາຍໄດ້ ແລະ ບໍ່ອະນຸຍາດໃຫ້ພາກສ່ວນ ຫຼື ບຸກຄົນໃດ ນຳເອົາໄປຫາລາຍໄດ້ ໃດໆທັງໝົດ. ທ່ານສາມາດນຳເອົາຊີຣີ້ທັງ 8 ຕອນໄປນຳໃຊ້ເຂົ້າໃນສື່ການຮຽນ-ການສອນ ແລະ ເປັນຂໍ້ມູນປະກອບບົດຕ່າງໆໄດ້. ຖ້າຕ້ອງການດັດແກ້ ຫຼື ເພີ່ມຕື່ມເນື້ອໃນບາງຕອນ ກະລຸນາສົ່ງອີເມວເຖິງ chanthalangsy@rda.org.la

ທີ່ຢູ່ຕິດຕໍ່ພົວພັນ:
ສູນພັດທະນາຊົນນະບົດ, ບ້ານວັດນາກ ຮ່ອມ 7, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ.
ເບີໂທ: 021 315457 / Email: info@rda.org.la / website: www.rda.org.la
FB page: Rural Development Agency

ທ່ານສາມາດດາວໂຫຼດຮູບເງົາຊຸດ "ເຮົາ HOUSE the series"
ໄດ້ທີ່: ຊ່ອງ YouTube channal: ສູນພັດທະນາຊົນນະບົດ Rural Development Agency
ຫຼື ສາມາດສະແກນ QR code ດ້ານລຸ່ມໄດ້ເລີຍ

ຄູ່ມືແນະນຳ
ການນຳໃຊ້ຮູບເງົາຊຸດ "ເຮົາ House the series" ເຂົ້າໃນກິດຈະກຳຕ່າງໆ